**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 25 ກໍຣະກະດາ 2010 (07-25-2010)**

---

**<u>ພລັງຂອງຄວາມສັດຊື່:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (1 ຊາມູເອນ 24:20-22; 26:1-2, 7-12,21-25)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ກ່ຽວກັບດາວິດໄວ້ຊີວິດຂອງຊາອູນ, ໂດຍບໍ່ໄດ້ຄໍານຶງເຖິງ ເຈຕະນາຂອງຊາອູນທີ່ມຸ້ງໝາຍຈະຂ້າລາວ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສໍາຄັນ?:</u>**

ໂດຍສ່ວນຕົວແລ້ວ ຜູ້ໃຫຍ່ພວກເຮົາ ມັກຈະຄິດຢູ່ເລື້ອຍໆວ່າ ຄວາມຖືກຕ້ອງເປັນທັມ ແລະການໃຫ້ຄວາມຈົງຮັກພັກດີກັບພຣະເຈົ້ານັ້ນແມ່ນບໍ່ມີຄ່າຕອບແທນອັນໃດເລີຍ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ຈະຊ່ອຍໃຫ້ຮູ້ໄດ້ວ່າ ມີຣາງວັນໃຫ້ສໍາລັບຄວາມສັດຊື່ ແລະຄວາມຈົງຮັກພັກດີຕໍ່ພຣະເຈົ້າ, ແລະກໍຍັງສາມາດຊ່ອຍທ່ານໃຫ້ມີຄໍາໝັ້ນສັນຍາວ່າ ຈະດໍາເນີນຊີວິດຢູ່ໃນທາງຖືກຕຕ້ອງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນໍາຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈໍາຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສໍາຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນໍາ:</u>**

- ນໍາພານັກຮຽນເຂົ້າສູ່ບົດຮຽນໃນມື້ນີ້ ແລະໃຫ້ນັກຮຽນຜູ້ນຶ່ງອາສາສມັກແບ່ງປັນສິ່ງທີ່ລາວໄດ້ຮຽນ ແລະໄດ້ໃຊ້ພລັງຂອງພຣະເຈົ້າແທນພລັງຂອງລາວເອງແນວໃດ.
- ຄວາມສັດຊື່ເປັນບົດບາດສໍາຄັນແນວໃດ? ຣາງວັນປະເພດໃດທີ່ເຂົາເຈົ້າຈະໄດ້ຮັບເພາະຄວາມສັດຊື່ຂອງເຂົາເຈົ້າທີ່ມີຕໍ່ຄົນອື່ນ?
- ບົດຮຽນໃນມື້ນີ້ ຈະຊ່ອຍພວກເຮົາໃຫ້ຮູ້ຈັກວ່າມີຣາງວັນ ສໍາລັບຄວາມສັດຊື່ ຄວາມຊອບທັມທີ່ມີຕໍ່ພຣະເຈົ້າ.

1. **ຈິງໃຈທີ່ຜິດຄໍາສັນຍາ:** (1 ຊາມູເອນ 24:20-22; 26:1-2)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ຊາມູເອນ 24:20-22; 26:1-2
- ໃນຂໍ້ທີ 20 ແລະ 21 ແມ່ນຫຍັງທີ່ຊາອູນໄດ້ຮັບຮູ້? (ລາວໄດ້ຮູ້ວ່າ ດາວິດແມ່ນຜູ້ທີ່ພຣະເຈົ້າຊົງທົດສົງ (ເຈີມ) ແລ້ວຊາອູນສົມຄວນຈະປະຕິບັດຕໍ່ດາວິດແນວໃດ?
- ບາງເທື່ອ ພວກເຮົາກໍມີຄວາມປາຖນາຄວາມສັດຊື່ສໍາລັບພວກເຮົາເອງ ເພື່ອໃຫ້ພວກເຮົາມີຄວາມສັດຊື່ຕໍ່ພຣະເຈົ້າ. ສິ່ງທີ່ພວກເຮົາຕ້ອງທໍານັ້ນກໍຄື ໃຫ້ຕັດສິນໃຈທໍາສິ່ງໃດກໍຂໍໃຫ້ມີຄວາມສັດຊື່ຕໍ່ພຣະເຈົ້າ. ແມ່ນຫຍັງທີ່ພວກເຮົາສາມາດກະທໍາເພື່ອສະແດງເຖິງຄວາມສັດຊື່ຂອງພວກເຮົາທີ່ມີຕໍ່ພຣະເຈົ້າ?
- ຊາອູນໄດ້ເຂົ້າໃຈວ່າ ແມ່ນພຣະເຈົ້າແທ້ໆ ເປັນຜູ້ເລືອກດາວິດ ແລະເປັນຄວາມສໍາເຣັດຂອງພຣະອົງ.
- ແມ່ນຫຍັງທີ່ເປັນຄວາມຈິງໃຈຂອງຊາອູນທີ່ຈະກະທໍາຜິດຕໍ່ສູ້ພຣະເຈົ້າ?
- ແມ່ນພຣະເຈົ້າເປັນຜູ້ປົກຄອງທຸກຢ່າງບໍ່ ຫລືເປັນຜູ້ນໍາໂດຍຕໍາແໜ່ງຂອງພລັງຂອງພຣະອົງ?
- ພວກເຮົາໂຊຄວາມບໍ່ສັດຊື່ຕໍ່ພຣະເຈົ້າ ຕອນທີ່ພວກເຮົາເລືອກທີ່ບໍ່ໃຫ້ກຽດຕໍ່ການນໍາພາຂອງພຣະອົງ,

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 24:20-22; 26:1-2)

1. ທ່ານຈະໃຫ້ກຽດນັບຖືຜູ້ນໍາປະເພດໃດ?
2. ແມ່ນຫຍັງທີ່ຕໍ່ສູ້ກັບຄວາມເຊື່ອໃນພຣະເຈົ້າ ແລະຄວາມສັດຊື່ຕໍ່ພຣະອົງຂອງທ່ານ?
3. ແມ່ນຫຍັງທີ່ເປັນຜົນຂອງການເມີນເສີຍລະເລີຍຂອງຜູ້ນໍາ ທີ່ບໍ່ໃຫ້ກຽດນັບຖືພຣະເຈົ້າ?
4. ໜ້າທີ່ຂອງການເປັນຜູ້ນໍາແນວໃດທີ່ທ່ານຢາກໄດ້?
5. ໜ້າທີ່ຮັບຜິດຊອບຫຍັງແດ່ທີ່ພຣະເຈົ້າຊົງມອບໄວ້ກັບທ່ານ?
6. ມີພາຣະໜ້າທີ່ອັນໃດແດ່ທີ່ທ່ານໄດ້ທໍາຕາມແຜນການຂອງພຣະເຈົ້າໃນຊີວິດຂອງທ່ານ?
7. ຍັງມີລັກສະນະນິສັຍແນວໃດແດ່ທີ່ຈະຕ້ອງປ່ຽນແປງເພື່ອຈະໃຫ້ຄົນອື່ນມີຄວາມສົນໃຈໃນຕົວຜູ້ນໍາ?

2. **ການໃຊ້ຄວາມໄວ້ວາງໃຈ:** (1 ຊາມູເອນ 26:7-12)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 1 ຊາມູເອນ 26:7-12
- ມີເຫດຜົນອັນໃດທີ່ດາວິດບໍ່ຂ້າຊາອູນ ທັງໆທີ່ມີໂອກາດ?
- ຄວາມສັດຊື່ ດາວິດມີຕໍ່ພຣະເຈົ້າ, ການຢູ່ໂດດດ່ຽວທີ່ເປັນເຫດຜົນທີ່ເຮັດໃຫ້ດາວິດບໍ່ຂ້າຊາອູນ ແມ່ນບໍ່?
- ໃນ 1 ຊາມູເອນ 16:1-13 ໄດ້ບອກເຖິງບ່ອນທີ່ຊາມູເອນທົດສົງດາວິດໃຫ້ເປັນກະສັດຂອງອິສຣາເອນ.
- ການທົດສົງດາວິດມີຜົນສະທ້ອນຕໍ່ການທີ່ລາວຕັດສິນໃຈບໍ່ຂ້າຊາອູນແນວໃດ?
- ດາວິດອາດມີຜູ້ສນັບສນູນໃຫ້ຂ້າຊາອູນ ເພາະລາວຮູ້ວ່າລາວຈະໄດ້ເປັນກະສັດ, ແຕ່ກໍອາດເປັນເພາະມີຄົນທີ່ບໍ່ເຫັນພ້ອມເໝືອນກັນ, ສິ່ງທີ່ສໍາຄັນທີ່ສຸດຄື ລາວມີຄວາມໂຄຣົບຢໍາເກງພຣະເຈົ້າທີ່ໄດ້ຊົງເລືອກລາວໃຫ້ເປັນກະສັດ.
- ມັນເປັນສິ່ງທີ່ງ່າຍບໍ່ທີ່ພຣະເຈົ້າໃຫ້ໂອກາດແກ່ດາວິດໃນການທີ່ຈະຂ້າຊາອູນ? ໃຫ້ສົນທະນາກັນເບິ່ງ. ເພາະພວກເຮົາມີໂອກາດ ຫລື ຄວາມເປັນທັມ ທີ່ບໍ່ໃຫ້ພວກເຮົາເຮັດສິ່ງໃດສິ່ງນຶ່ງທີ່ບໍ່ຖືກຕ້ອງ. ໃຫ້ສົນທະນາກັນເຣື່ອງນີ້ຄືກັນ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 26:7-12

1. ອາບີໄຊມີອິດທິພົນຕໍ່ການຕັດສິນໃຈຂອງດາວິດແນວໃດ? ບົດຮຽນນີ້ ມີເຣື່ອງຄວາມສໍາຄັນຂອງການມີເພື່ອນ ແລະຄອບຄົວທີ່ຍໍາເກງໃຫ້ກຽດພຣະເຈົ້າເອີ້ວ່າແນວໃດ?
2. ດາວິດປະຕິບັດແນວໃດ ຫລືບໍ່ເຮັດຫຍັງເລີຍ, ຜົນທີ່ລາວໄດ້ຮັບຈາກການເຊື່ອໃນພຣະເຈົ້າຜູ້ຍິ່ງໃຫຍ່ສູງສຸດ ນັ້ນມີຫຍັງແດ່?
3. ບັນຫາແນວໃດທີ່ທ່ານໄດ້ພຍາຍາມແກ້ໄຂດ້ວຍຕົນເອງ ໂດຍທີ່ບໍ່ໄດ້ລໍຖ້າເວລາຂອງພຣະເຈົ້າ?
4. ຈະມີຫຍັງເກີດຂຶ້ນ ຖ້າທ່ານລໍຖ້າພຣະເຈົ້າໃນການແກ້ບັນຫານັ້ນໆ?

3 . **ຣາງວັນຂອງຄວາມຈົງຮັກພັກດີ:** (1 ຊາມູເອນ 26:21-25)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 26:21-25
- ສົນທະນາກັນເຣື່ອງທີ່ດາວິດໄດ້ຕັດສິນໃຈເລືອກເອົາການທີ່ບໍ່ຂ້າຊາອູນ. ຄິດເບິ່ງຄວາມຊອບທັມ ຄວາມຈົງຮັກພັກດີຂອງດາວິດ. ຜົນໄດ້ຮັບກໍຄື ການອວຍພຣະພອນຂອງພຣະເຈົ້າທີ່ໃຫ້ດາວິດ ເຮັດໃຫ້ຊີວິດຂອງດາວິດມີການປ່ຽນແປງ.
- ພວກເຮົາຫວັງຈະໄດ້ຫຍັງຈາກພຣະເຈົ້າໃນເມື່ອພວກເຮົາມີຄວາມສັດຊື່ຕໍ່ພຣະອົງ?
- ຄວາມອາຄາດບບາດໝາງມີຢູ່ໃນຊີວິດບັນດາຜູ້ທີ່ເຊື່ອຢູ່ບໍ່?
- ສຸພາສິດບົດທີ 20:22 ແລະໂຣມ 12:19-20 ກ່າວເຖິງບັນຫາຂອງດາວິດແນວໃດ?
- ອີງຕາມ 1 ຊາມູເອນ 16:24. ແມ່ນຫຍັງທີ່ດົນໃຈດາວິດບໍ່ໃຫ້ຂ້າຊາອູນ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 26:21-25

1. ເລັ້ມຕົ້ນຊາອູນທີ່ໄດ້ຮັບໂດຍທີ່ດາວິດບໍ່ໄດ້ຂ້າລາວນັ້ນຄືແນວໃດ? ໃນພຣະທັມໂຣມ 12:19-20 ໄດ້ກ່າວເຖິງການກະທໍາຂອງດາວິດເອົາໄວ້ແນວໃດ?
2. ພຣະເຈົ້າອວຍພອນຄວາມສັດຊື່ຂອງດາວິດແນວໃດແດ່? ພຣະເຈົ້າໄດ້ອວຍພອນຄວາມສັດຊື່ຂອງທ່ານ ໃນທາງໃດ?
3. ການອະທິຖານແນວໃດພວກເຮົາຄວນຄວນທູນຂໍ ໃນເວລາພວກເຮົາພົບກັບການບໍ່ໃຫ້ກຽດ ພຣະເຈົ້າ ແລະບໍ່ຍອມໃຫ້ພຣະອົງບັນຊາ?

**ພຣະຄັມພີແຫ່ງຄວາມຈິງ**

- ພຣະເຈົ້າຊົງຈັດຕຽມຄວາມເຂັ້ມແຂງໃຫ້ໃນເວລາການຫລອກລວງເຂົ້າມາ ແມ້ກະທັ້ງເວລາທີ່ຄົນເອົາປຽບເອົາລັດ ພວກເຮົາກໍຍັງໄດ້ຮັບການຊູກຽດຢູ່.
- ແຜນການທີ່ວາງໄວ້ ກໍຈະໄດ້ຮັບການປຶກສາຈາກເພື່ອນຝູງ ຫລືຄົນໃນຄອບຄົວ ຈະນໍາພາໄປເຖິງຄວາມສໍາເຣັດ ແຕ່ການຕອບຄືມີອາຍຸຍືນ.
- ການເຊື່ອໄວ້ວາງໃຈໃນພຣະເຈົ້າອາດມີການເສື່ອມລົງ ແຕ່ການມີໂອການນັ້ນຈະມີຕລອດຊີວິດ.
- ຄວາມສັດຊື່ຕໍ່ພຣະເຈົ້າຄວນຢູ່ທີ່ພື້ນຖານສໍາລັບຄວາມໂຄຣົບນັບຖື ແລະຄວາມສັດຊື່ນັ້ນພຣະເຈົ້າໄດ້ຊົງເລືອກສັນເປັນຜູ້ນໍາພວກເຮົາ.